ທັງໝົດກ່ຽວກັບເຄຣດິດອາກອນສຳລັບເບ້ຍປະກັນໄພຂັ້ນສູງ

# ຈຳນວນເງິນຂອງທ່ານເພີມຂຶ້ນ



## ແມ່ນຫຍັງຄືເຄຣດິດອາກອນ?

ເຄຣດິດອາກອນຈະຫຼຸດເບ້ຍປະກັນໃນແຜນປະກັນສຸຂະພາບຂອງທ່ານ. ເບ້ຍປະກັນຂອງທ່ານແມ່ນຈຳນວນເງິນທີ່ທ່ານຕ້ອງຈ່າຍໃນແຕ່ລະເດືອນເພື່ອຮັບເອົາການຄຸ້ມຄອງດ້ານປະກັນໄພ. ທ່ານສາມາດຮັບເອົາເຄຣດິດອາກອນຜ່ານ *Washington Healthplanfinder* ເທົ່ານັ້ນ.

## ເຄຣດິດອາກອນໃຊ້ງານແນວໃດ?

ຈຳນວນເຄຣດິດອາກອນທີ່ທ່ານໄດ້ຮັບແມ່ນຂຶ້ນກັບລາຍໄດ້ຄົວເຮືອນຂອງທ່ານ. ຍິ່ງທ່ານມີລາຍໄດ້ຕ່ຳ, ທ່ານອາດມີຄຸນສົມບັດສຳລັບເຄຣດິດອາກອນຫຼາຍສ່ຳນັ້ນ. ເຄຣດິດອາກອນຈະຖືກຄຳນວນ ເມື່ອທ່ານລົງທະບຽນ.




$500
ເບ້ຍປະກັນປະ ຈຳເດືອນຂອງທ່ານ

$200
ເຄຣດິດອາກອນທີ່ຈ່າຍໂດຍ IRS

$300
ຈຳນວນທີ່ທ່ານຈ່າຍ

## ຂ້າພະເຈົ້າຈຳເປັນຕ້ອງຮູ້ຫຍັງອີກ?

**ລາຍງານການປ່ຽນແປງ.** ອັບເດດຂໍ້ມູນຄົວເຮືອນຂອງທ່ານໃນ *Washington Healthplanfinder.* ການເຮັດແບບນີ້ຈະຮັບປະກັນວ່າທ່ານບໍ່ຈຳເປັນຕ້ອງຈ່າຍຄືນເຄຣດິດອາກອນໃນພາຍຫຼັງ.

**ໃຊ້ 1095-A ຂອງທ່ານ.** ແບບຟອມນີ້ແມ່ນຈຳເປັນເພື່ອມອບອາກອນຂອງທ່ານ. ທ່ານຈະໄດ້ຮັບແບບຟອມນີ້ໃນເດືອນມັງກອນ.

**ມອບອາກອນຂອງທ່ານໃຫ້ທັນເວລາ.** ໃຊ້ 1095-A ຂອງທ່ານ ແລະ ແບບຟອມ 8962 ຂອງ IRS ເພື່ອມອບອາກອນຂອງທ່ານ. IRS ຈະຢຸດຈ່າຍເຄຣດິດອາກອນຂອງທ່ານ ຖ້າທ່ານບໍ່ມອບ. ຖ້າທ່ານແຕ່ງງານແລ້ວ, ທ່ານຕ້ອງມອບຮ່ວມກັນເພື່ອຮັບເອົາເຄຣດິດອາກອນ.

## ຂໍຄວາມຊ່ວຍເຫຼືອ ຖ້າທ່ານຕ້ອງການ

ສູນໃຫ້ຄວາມຊ່ວຍເຫຼືອແກ່ລູກຄ້າຂອງພວກເຮົາສາມາດຕອບຄຳຖາມ ແລະ ເຊື່ອມຕໍ່ທ່ານກັບຜູ້ຊ່ຽວຊານໃນພື້ນທີ່ຂອງທ່ານ.

ໂທຫາພວກເຮົາ
**1-855-923-4633**

ເຂົ້າຊົມພວກເຮົາທີ່
**wahealthplanfinder.org**

ດາວໂຫຼດແອັບ
**WAPlanfinder**